ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

-----======000======-----

ກະຊວງການເງິນ

ກົມພາສີ

ເລກທີ: 03684 /ກພສ

ນະຄອນຫຼວງວຽງຈັນ,ວັນທີ: 15 MAY 2014

# <u>ແຈ້ງການແນະນຳ</u>

ເຖິງ : ຫົວໜ້າພະແນກອ້ອມຂ້າງ ກົມພາສີ, ຫົວໜ້າພາສີປະຈຳເຂດ, ຫົວໜ້າດ່ານພາສີຊາຍແດນ.

ເລື່ອງ : ການຄຸ້ມຄອງການສົ່ງອອກເຄື່ອງປ່າຂອງດົງ.

- ອີງຕາມ ກົດໝາຍວ່າດ້ວຍພາສີ ສະບັບເລກທີ: 04/ສພຊ, ລົງວັນທີ: 20 ທັນວາ2011.
- ອີງຕາມ ແຈ້ງການຫ້ອງວ່າການລັດຖະບານ ສະບັບເລກທີ: 1398/ຫລບ.ກສສ, ລົງວັນທີ: 13 ກັນຍາ 2013 ກ່ຽວກັບການຍົກເວັ້ນພາສີຂາອອກ ສາລັບຄັ່ງ ແລະ ຍານ ຂອງບໍລິສັດອາໂກຼຟໍເລັກ (Agroforex)

ກົມພາສີ ອອກແຈ້ງການແນະນຳຄື:

1. ການສົ່ງອອກ ເຄື່ອງປ່າຂອງດົງ ທີ່ມີການສົ່ງເສີມການປູກ, ສົ່ງເສີມການປົກປັກຮັກສາ, ຟື້ນຟູບົວລະບັດປ່າທຳມະຊາດ ແລະ ແນະນຳ ເຕັກນິກໃນການເກັບກູ້ ໃຫ້ມີລັກສະນະຍືນຍົງ ໂດຍມີໜັງສືຢັ້ງຢືນແຫຼ່ງທີ່ມາຈາກທ້ອງຖິ່ນຂອງຂະແໜງກະສິກຳ ແລະ ປ່າໄມ້ ເຊັ່ນ: ໃບຢັ້ງຢືນການປູກ ແລະ ການຟື້ນຟູປ່າ, ໃບຢັ້ງການຊຸກຍູ້ປູກ ແລະ ຟື້ນຟູ ໃຫ້ຍົກເວັ້ນພາສີຂາອອກ.
2. ການປະກອບເອກະສານຂາອອກ ຕ້ອງມີໃບຢັ້ງຢືນຂອງຂະແໜງກະສິກຳ ແລະ ປ່າໄມ້ ກ່ຽວກັບຂັ້ນຕອນ ແລະ ມາດຖານ ເພື່ອເປັນບ່ອນອີງໃນການກວດກາທີ່ມາ ເຄື່ອງປ່າຂອງດົງ ວ່າມາຈາກແຂວງໃດ ເພື່ອຈຳກັດຊ່ອງວ່າງບໍ່ໃຫ້ມີການສວຍໂອກາດ ຖ້າບໍ່ມີເອກະສານຢັ້ງຢືນຕາມທີ່ໄດ້ລະບຸໄວ້ຂ້າງເທິງນີ້ ການສົ່ງອອກຕ້ອງໄດ້ເສຍພາສີຂາອອກ ຕາມລະບຽບການ.
3. ມອບໃຫ້ຫົວໜ້າພາສີເຂດ, ຫົວໜ້າດ່ານພາສີຊາຍແດນ ເອົາໃຈໃສ່ ອຳນວຍຄວາມສະດວກໃນການສົ່ງອອກຄັ່ງ ແລະ ຍານ ຂອງບໍລິສັດ ອາໂກຼຟໍເລັກ (Agroforex) ຕາມແຈ້ງການຂອງຫ້ອງວ່າການລັດຖະບານ ສະບັບເລກທີ:1398/ຫລບ.ກສສ, ລົງວັນທີ: 13 ກັນຍາ 2013.
4. ໃນການຈັດຕັ້ງປະຕິບັດຕົວຈິງ ຖ້າພົບຂໍ້ຫຍຸ້ງຍາກ ໃຫ້ລາຍງານກົມພາສີ ເພື່ອຂໍທິດຊີ້ນຳ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານ ເພື່ອຊາບ ແລະ ພ້ອມກັນຈັດຕັ້ງປະຕິບັດ.

ຫົວໜ້າກົມພາສີ

ສະພັງທອງ ສີພັນດອນ

Saphanthone SIPHANDON